ສຸຂະພາບຂອງລັດ NSW

ວັກຊີນປ້ອງກັນໄວຣັດຕັບອັກເສບ B

ເອກະສານຂໍ້ມູນຂອງພໍ່ແມ່

ລັດຖະບານອົດສະຕາລີເຮັດໃຫ້ວັກຊີນບາງຊະນິດຟຣີພາຍໃຕ້ໂຄງການປ້ອງກັນແຫ່ງຊາດ (NIP).

ຄຳຖາມ. ໄວຣັດຕັບອັກເສບ B ແມ່ນຫຍັງ?

ໄວຣັດຕັບອັກເສບ B ເປັນເຊື້ອໄວຣັສທີ່ສາມາດເຮັດໃຫ້ເກີດອາການໄຂ້, ຕົວເຫຼືອງ ແລະ ຮູ້ສຶກບໍ່ສະບາຍ. ອາດຈະນຳໄປສູ່ພາວະຕັບເສຍຫາຍ (ຕັບແຂງ) ຫຼື ມະເຮັງຕັບ. ບາງຄົນອາດບໍ່ຮູ້ວ່າຕົນເອງມີໄວຣັດຕັບອັກເສບ B ແລະ ສາມາດແຜ່ເຊື້ອໄປສູ່ຄົນອື່ນ.

ຄຳຖາມ. ໄວຣັດຕັບອັກເສບ B ແຜ່ກະຈາຍໄດ້ແນວໃດ?

ໄວຣັດຕັບອັກເສບ B ແຜ່ກະຈາຍຜ່ານ:

- **ການເກີດ (ຈາກແມ່ທີ່ຕິດເຊື້ອໄປສູ່ລູກ)**
- **ການສຳຜັດກັບບາດແຜເປີດ ຫຼື ບາດແຜ**
- **ການຮ່ວມເພດທີ່ບໍ່ປອດໄພ**
- **ການບາດເຈັບການຖືກເຂັມແທງ**
- **ການສັກ ຫຼື ເຈາະດ້ວຍອຸປະກອນທີ່ບໍ່ສະອາດ**
- **ການແບ່ງປັນເຂັມ.**

ຄຳຖາມ. ວັກຊີນເຮັດວຽກແນວໃດ?

ວັກຊີນຊ່ວຍລະບົບພູມຕ້ານທານຂອງທ່ານຕໍ່ສູ້ກັບການຕິດເຊື້ອ. ຖ້າວ່າຜູ້ທີ່ໄດ້ຮັບການສັກວັກຊີນສຳຜັດກັບການຕິດເຊື້ອເຫຼົ່ານີ້, ລະບົບພູມຕ້ານທານສາມາດຕໍ່ສູ້ກັບພະຍາດໄດ້ດີຂຶ້ນ, ບໍ່ວ່າຈະປ້ອງກັນບໍ່ໃຫ້ເກີດພະຍາດ ຫຼື ເຮັດໃຫ້ພະຍາດຮ້າຍແຮງໜ້ອຍລົງ.

ຄຳຖາມ. ວັກຊີນປ້ອງກັນໄວຣັດຕັບອັກເສບ B ມີປະສິດທິພາບແນວໃດ?

ວັກຊີນປ້ອງກັນໄວຣັດຕັບອັກເສບ B ໃຫ້ການປົກປ້ອງໄວຣັດໄດ້ຢ່າງເຂັ້ມແຂງ.

ຄຳຖາມ. ຕ້ອງໃຊ້ຈັກໂດສ?

- **ເດັກນ້ອຍ ແລະ ໄວລຸ້ນອາຍຸ 10-19 ປີ ຕ້ອງສັກ 3 ໂດສສຳລັບເດັກ ຫຼື;**
- **ເດັກນ້ອຍ ແລະ ໄວລຸ້ນ ທີ່ມີອາຍຸລະຫວ່າງ 11-15 ປີ ສາມາດສັກວັກຊີນໄດ້ 2 ໂດສສຳລັບຜູ້ໃຫ່ຍ ເວັ້ນເສຍແຕ່ວ່າເຂົາເຈົ້າໄດ້ຮັບວັກຊີນຕອນເດັກອ່ອນ ຫຼື ເດັກ.**

ຄຳຖາມ. ໃຜແດ່ຄວນໄດ້ຮັບວັກຊີນ?

ເດັກນ້ອຍ ແລະ ໄວລຸ້ນທຸກຄົນທີ່ຍັງບໍ່ໄດ້ຮັບການສັກວັກຊີນປ້ອງກັນໄວຣັດຕັບອັກເສບ B ຄົບໂດສຄວນໄດ້ຮັບວັກຊີນ.

ຄຳຖາມ. ໃຜທີ່ບໍ່ຄວນໄດ້ຮັບວັກຊີນ?

ຫ້າມໃຫ້ວັກຊີນແກ່ຜູ້ທີ່:

- **ມີອາການແພ້ຢ່າງຮ້າຍແຮງ (anaphylaxis) ຕໍ່ກັບປະລິມານ ຫຼື ສ່ວນປະກອບໃນວັກຊີນທີ່ເຄີຍໄດ້ຮັບມາກ່ອນ.**
- **ກຳລັງຖືພາ.**

ຄຳຖາມ. ວັກຊີນມີຄວາມປອດໄພຫຼາຍເທົ່າໃດ?

ວັກຊີນໃນອົດສະຕາລີມີຄວາມປອດໄພຫຼາຍ. ພວກເຂົາຈະຕ້ອງຜ່ານການກວດສອບຄວາມປອດໄພຢ່າງເຂັ້ມງວດກ່ອນທີ່ຈະໄດ້ຮັບການອະນຸມັດຈາກສຳນັກງານບໍລິຫານສິນຄ້າທາງການແພດ (TGA). TGA ຍັງຕິດຕາມຄວາມປອດໄພຂອງວັກຊີນຫຼັງຈາກການນຳໃຊ້ງານອີກດ້ວຍ.

ຄຳຖາມ. ວັກຊີນປ້ອງກັນໄວຣັດຕັບອັກເສບ B ປະກອບດ້ວຍຫຍັງ?

ວັກຊີນປະກອບມີ:

- **ອະລູມິນຽມໄຮໂດຣໄຊ ເພື່ອຊ່ວຍໃນການເຮັດວຽກ**
- **ທາດໂປຼຕີນຈາກເຊື້ອລາ (ອາດຈະມີຢູ່)**
- **ວັດສະດຸທີ່ມາຈາກງົວ (ອາດຈະມີຢູ່).**

ຄຳຖາມ. ວັກຊີນມີຜົນຂ້າງຄຽງຫຍັງແດ່?

ຜົນຂ້າງຄຽງມັກຈະບໍ່ຮຸນແຮງ ແລະ ອາດປະກອບມີ:

- **ອາການປວດ, ແດງ ຫຼື ໃຄ່ບວມບ່ອນທີ່ສັກຢາ.**

ຜົນຂ້າງຄຽງທີ່ຮ້າຍແຮງເກີດຂຶ້ນໄດ້ໜ້ອຍຫຼາຍ.

ຖ້າວ່າຕ້ອງການຂໍ້ມູນເພີ່ມເຕີມ, ໃຫ້ກວດສອບຂໍ້ມູນສຳລັບຜູ້ບໍລິໂພກ (CMI) ໄດ້ທີ່ health.nsw.gov.au/schoolvaccination. ຖ້າທ່ານເປັນຫ່ວງກ່ຽວກັບຜົນຂ້າງຄຽງ, ໃຫ້ຕິດຕໍ່ກັບແພດຂອງທ່ານ.

ຄຳຖາມ. ອາການແພ້ຮຸນແຮງແມ່ນຫຍັງ?

ອາການແພ້ຢ່າງຮຸນແຮງເປັນອາການແພ້ທີ່ພົບໜ້ອຍຫຼາຍແຕ່ຮ້າຍແຮງ. ອາດເຮັດໃຫ້ເສຍສະຕິ ຫຼື ເສຍຊີວິດໄດ້ ຖ້າວ່າບໍ່ໄດ້ຮັບການປິ່ນປົວໂດຍໄວ. ຜູ້ໃຫ້ບໍລິການການສັກວັກຊີນໄດ້ຮັບການຝຶກອົບຮົມມາເພື່ອຈັດການກັບອາການແພ້ຮຸນແຮງ.

ຄຳຖາມ. ຈະເກີດຫຍັງຂຶ້ນຖ້າຂ້າພະເຈົ້າບໍ່ມີບັນທຶກ ຫຼື ຈື່ບໍ່ໄດ້ວ່າລູກຂ້າພະເຈົ້າໄດ້ຮັບວັກຊີນຫຼື ບໍ?

ລູກຂອງທ່ານສາມາດເຂົ້າຮັບການສັກວັກຊີນປ້ອງກັນພະຍາດຕັບອັກເສບ B ຊ້ຳອີກຢ່າງປອດໄພ.